# ການຄັດລອກຜົນງານຂອງຜູ້ອື່ນ (Plagiarism)

# ແລະ ຈັນຍາບັນທາງວິຊາການ

By Andrii HUBAI
andrii.hubai@uni.lu

UNIVERSITÉ DU LUXEMBOURG

# ການຄັດລອກຜົນງານຄົນອື່ນແມ່ນຫຍັງ?

UNIVERSITÉ DU LUXEMBOURG

*[1] ການນຳໃຊ້ແນວຄວາມຄິດ, ຜົນງານການຂຽນ, ຜົນງານການປະດິດແຕ່ງ, ບົດເພງ, ຮູບພາບຂອງບຸກຄົນອື່ນໂດຍບໍ່ໄດ້ຮັບອະນຸຍາດ [2] ແລະ ນຳໃຊ້ສິ່ງດັ່ງກ່າວໃນຖານະວ່າເປັນຂອງຕົນເອງ (ທັງດ້ວຍຮູບແບບທີ່ຕັ້ງໃຈ ຫຼື ບໍ່ຕັ້ງໃຈ).*

# ເປັນຫຍັງການຄັດລອກຜົນງານຜູ້ອື່ນຈຶ່ງເປັນສິ່ງທີ່ບໍ່ດີ?

UNIVERSITÉ DU LUXEMBOURG

- ການຄັດລອກຜົນງານຂອງຜູ້ອື່ນຄວນຖືກຫຼີກລ້ຽງເຂົ້າໃນການເຮັດການວິໄຈຢູ່ສະເໝີ.
- ຍ້ອນຫຍັງ? ຖ້າຫາກການວິໄຈຄົ້ນຄວ້າທາງດ້ານກົດໝາຍຫາກບໍ່ແມ່ນການຄົ້ນຄວ້າສິ່ງໃໝ່ ແຕ່ແມ່ນຜົນງານທີ່ຖືກລັກຈາກການຄົ້ນຄວ້າຂອງຜູ້ອື່ນ, ຈະເຮັດໃຫ້ເຮົາສູນເສຍຈຸດປະສົງຂອງການຄົ້ນຄວ້າໂດຍລວມທັງໝົດ.
- ການພັດທະນາໂຮງຮຽນກົດໝາຍ ແລະ ການຄົ້ນຄວ້າວິໄຈທາງກົດໝາຍ, ໝາຍເຖິງການສ້າງເນື້ອຫາໃໝ່, ຫຼັກຄຳສອນໃໝ່ເພື່ອປັບປຸງສິ່ງທີ່ມີຢູ່ແລ້ວໃຫ້ສອດຄ່ອງກັບສະພາບຄວາມເປັນຈິງຂອງການພັດທະນາກົດໝາຍໃໝ່.
- ເປັນການລະເມີດທາງດ້ານຊັບສິນທາງປັນຍາ

ລອງຕັ້ງຄຳຖາມກັບຕົວເອງ: ເຈົ້າຕ້ອງການໃຫ້ຜູ້ອື່ນຄັດລອກຄວາມຄິດ/ຜົນງານຈາກການທຸ້ມເທ/ສິ່ງປະດິດຕ່າງໆທີ່ຕົນສ້າງຂຶ້ນຫຼືບໍ່?

# ສິ່ງໃດບໍ່ແມ່ນການຄັດລອກຜົນງານຂອງຜູ້ອື່ນ?

UNIVERSITÉ DU LUXEMBOURG

ການກະທຳຕໍ່ໄປນີ້ບໍ່ແມ່ນການຄັດລອກຜົນງານຂອງຜູ້ອື່ນ:

- ການແປຖອດຖອນຄວາມໝາຍຂອງບົດຄວາມດ້ວຍການນຳໃຊ້ຄຳເວົ້າຂອງຕົນເອງ (Paraphrasing) + ການສະໜອງແຫລ່ງອ້າງອີງ
- ການອ້າງອີງ/ກ່າວອ້າງ (‘’Quoting’’)/ເອກະສານອ້າງອີງ
- ການອ້າງອີງເນື້ອຫາຂອງທ່ານເອງ (Citing your own material)

# ຜົນກະທົບ/Consequences

- ການຄັດລອກຜົນງານຜູ້ອື່ນບໍ່ແມ່ນການກະທຳຜິດທາງກົດໝາຍ ແຕ່ເປັນການກະທຳຜິດທາງຈັນຍາບັນ.
- ການຄັດລອກຜົນງານຜູ້ອື່ນເປັນການລະເມີດບັນທັດຖານທາງຈັນຍາບັນ, ແຕ່ບໍ່ຖືວ່າເປັນການກະທຳຜິດທາງກົດໝາຍ. ເວັ້ນເສຍແຕ່ມີການລະບຸໄວ້ໃນກົດໝາຍທີ່ກ່ຽວຂ້ອງເຊັ່ນວ່າກົດໝາຍວ່າດ້ວຍຊັບສິນທາງປັນຍາ.
- ການກະທຳທີ່ຕິດພັນກັບການຄັດລອກຜົນງານຂອງຜູ້ອື່ນປຽບສະເໝືອນການເຮັດໃຫ້ເຊື່ອມເສຍກຽດ. ເປັນການກະທຳທີ່ສ້າງຄວາມເສຍຫາຍໃຫ້ແກ່ຊື່ສຽງ ແລະ ຄວາມຊື່ສັດທາງດ້ານວິຊາການຂອງຜູ້ກະທຳເອງ.

# ປະເພດຂອງການຄັດລອກຜົນງານ/Types of plagiarism

ມີ 2 ຮູບແບບທົ່ວໄປ: ແບບໂດຍກົງ (Direct) ແລະ ແບບໂມເສກ (Mosaic)

ຜູ້ຂຽນ:

Alan Fosk, "ອະນຸຍາໂຕຕຸລາການວ່າດ້ວຍການລົງທຶນ (Investiment Arbitration)", 2019 ສຳນັກພິມມະຫາວິທະຍາໄລ Poxford .

"ຈາກການວິເຄາະສົນທິສັນຍາທະວິພາຄີວ່າດ້ວຍການລົງທຶນ (*Bilateral Investment Treaties (BITs)*) ຫຼາຍກວ່າ 2500 ສະບັບພາຍໃຕ້ວິທີການດັດປັບໂຄງສ້າງທາງດ້ານປະລິມານ (*quantitave restructuring*) , *ເຮັດໃຫ້ເຮົາສາມາດສະຫຼຸບໄດ້ຫຼາຍປະການ. ປະເດັນທີ 1, ຂົງເຂດຂອງອະນຸຍາໂຕຕຸລາການທີ່ຕິດພັນກັບການລົງທຶນຈະເຕີບໃຫຍ່ຂຶ້ນສອງເທົ່າພາຍໃນທ້າຍປີ 2025. ປະເດັນທີ 2, ການຮຽກຮ້ອງສ່ວນໃຫຍ່ (90%) ຈະກ່ຽວຂ້ອງກັບສິດທິຕໍ່ຄວາມເສຍຫາຍ."*

*"Having analyzed more than 2500 Bilateral Investment Treaties (BITs) under the new method of quantitave restructuring, we have arrived to several conclusions. First, the field of investment arbitration will grow by two times by the end of 2025. Second, majority of the claims (90%) will concern the right for damages."*

# ການຄັດລອກຜົນງານຂອງຜູ້ອື່ນໂດຍກົງ/Direct Plagiarism

UNIVERSITÉ DU LUXEMBOURG

Alan Fosk, "On Investment Arbitration", 2019 Poxford University Press.

*"Having analysed more than 2500 Bilateral Investment Treaties (BITs) under the new method of quantitave restructuring, we have arrived to several conclusions. First, the field of investment arbitration will grow by two times by the end of 2025. Second, majority of the claims (90%) will concern the right for damages."*

---

ບົດຄວາມໃນປັດຈຸບັນໄດ້ທົບທວນຄືນທາງດ້ານແງ່ມຸມຕ່າງໆຂອງທ່າອຽງທີ່ຈະເກີດຂຶ້ນໃນອະນຸຍາໂຕຕຸລາການທີ່ຕິດພັນກັບການລົງທຶນ. ຈາກການວິເຄາະສົນທິສັນຍາທະວິພາຄີວ່າດ້ວຍການລົງທຶນ (Bilateral Investment Treaties (BITs)) ຫຼາຍກວ່າ 2500 ສະບັບພາຍໃຕ້ວິທີການດັດປັບໂຄງສ້າງທາງດ້ານປະລິມານ (quantitave restructuring) , ເຮັດໃຫ້ເຮົາສາມາດສະຫຼຸບໄດ້ຫຼາຍປະການ. ປະເດັນທີ 1, ຂົງເຂດຂອງອະນຸຍາໂຕຕຸລາການທີ່ຕິດພັນກັບການລົງທຶນຈະເຕີບໃຫຍ່ຂຶ້ນສອງເທົ່າພາຍໃນທ້າຍປີ 2025. ປະເດັນທີ 2, ການຮຽກຮ້ອງສ່ວນໃຫຍ່ (90%) ຈະກ່ຽວຂ້ອງກັບສິດທິຕໍ່ຄວາມເສຍຫາຍ." ສະຫຼຸບຄວາມໄດ້ວ່າ ໂລກຂອງອະນຸຍາໂຕຕຸລາການທີ່ຕິດພັນກັບການລົງທຶນຈະເຕີບໃຫຍ່ ແລະ ພັດທະນາຕໍ່ໄປ.

Current article had reviewed the aspects of the upcoming trend in investment arbitration. Having analysed more than 2500 Bilateral Investment Treaties (BITs) under the new method of quantitative restructuring, we have arrived to several conclusions. First, the field of investment arbitration will grow two times by the end of 2025. Second, majority of the claims (90%) will concern the right for damages. To conclude, the world of investment arbitration would continue to grow and evolve.

# ການຄັດລອກຜົນງານແບບໂມເສກຮູບແບບທີ 1 /Mosaic Plagiarism ver. 1

UNIVERSITÉ DU LUXEMBOURG

Alan Fosk, ”On Investment Arbitration”, 2019 Poxford University Press.

*“Having analysed more than 2500 Bilateral Investment Treaties (BITs) under the new method of quantitave restructuring, we have arrived to several conclusions. First, the field of investment arbitration will grow by two times by the end of 2025. Second, majority of the claims (90%) will concern the right for damages.”*

---

ບົດຄວາມໃນປັດຈຸບັນໄດ້ທົບທວນຄືນທາງດ້ານແງ່ມູມຕ່າງໆຂອງທ່າອຽງທີ່ຈະເກີດຂຶ້ນໃນອະນຸຍາໂຕຕຸລາ ການທີ່ຕິດພັນກັບການລົງທຶນ. ໂດຍສະເພາະໃນປັດຈຸບັນເຊິ່ງເຫັນແຈ້ງໄດ້ວ່າອະນຸຍາໂຕຕຸລາການທີ່ຕິດພັນກັບການລົງທຶນຈະພັດທະນາ ແລະ ຂະຫຍາຍຕົວຢ່າງໜ້ອຍ 50 ເປີເຊັນ. ນອກຈາກນີ້, ອາດພົບເຫັນການຮຽກຮ້ອງຄ່າເສຍຫາຍທີ່ຫຼາຍຂຶ້ນ. ສະຫຼຸບລວມໄດ້ວ່າໂລກຂອງອະນຸຍາໂຕຕຸລາການທີ່ຕິດພັນກັບການລົງທຶນຈະສືບຕໍ່ຂະຫຍາຍຕົວ ແລະ ພັດທະນາ.

Current article had reviewed the aspects of the upcoming trend in investment arbitration. In particular, it is now clear that investment arbitration will evolve and expand with a minimum of fifty percent. In addition, one could witness the uprise of damages claims. To conclude, the world of investment arbitration would continue to grow and evolve.

# ການຄັດລອກຜົນງານແບບໂມເສກຮູບແບບທີ 2 /Mosaic Plagiarism ver. 2

UNIVERSITÉ DU LUXEMBOURG

Alan Fosk, ”On Investment Arbitration”, 2019 Poxford University Press.

*“Having analysed more than 2500 Bilateral Investment Treaties (BITs) under the new method of quantitave restructuring, we have arrived to several conclusions. First, the field of investment arbitration will grow by two times by the end of 2025. Second, majority of the claims (90%) will concern the right for damages.”*

---

ບົດຄວາມໃນປັດຈຸບັນໄດ້ທົບທວນຄືນທາງດ້ານແງ່ມູມຕ່າງໆຂອງທ່າອ່ຽງທີ່ຈະເກີດຂຶ້ນໃນອະນຸຍາໂຕຕຸລາການທີ່ຕິດພັນກັບການລົງທຶນ. ໂດຍສະເພາະໃນປັດຈຸບັນເຊິ່ງເຫັນແຈ້ງໄດ້ວ່າອະນຸຍາໂຕຕຸລາການທີ່ຕິດພັນກັບການລົງທຶນຈະເພີ່ມຂຶ້ນຢ່າງນ້ອຍ 50%. ຂໍ້ສະຫຼຸບນີ້ແມ່ນໄດ້ມາຈາກການນໍາໃຊ້ວິທີການດັດປັບໂຄງສ້າງທາງດ້ານປະລິມານ. ນອກຈາກນີ້, ຍັງມີການຄາດຄະເນລ່ວງໜ້າວ່າທ່າອ່ຽງການຮຽກຮ້ອງສ່ວນໃຫຍ່ຈະຕິດພັນກັບປະເດັນທາງດ້ານຄວາມເສຍຫາຍພາຍໃນກາງທົດສະວັດປັດຈຸບັນ. ສະຫຼຸບຄວາມໄດ້ວ່າໂລກຂອງອະນຸຍາໂຕຕຸລາການທີ່ຕິດພັນກັບການລົງທຶນຈະສືບຕໍ່ຂະຫຍາຍຕົວ ແລະ ພັດທະນາຕໍ່ໄປ.

Current article had reviewed the aspects of the upcoming trend in investment arbitration. In particular, it is now clear that investment arbitration will experience the rise of at least 50%. This conclusion is reached via utilising the quantitative restructuring method. Besides, there is a certain prevision of having the prevailing majority of claims to relate to the matter of damages by the middle of the current decade. To conclude, the world of investment arbitration would continue to grow and evolve.

# ການຄັດລອກຜົນງານແບບໂມເສກຮູບແບບທີ 3/ Mosaic Plagiarism ver. 3

UNIVERSITÉ DU LUXEMBOURG

Alan Fosk, ”On Investment Arbitration”, 2019 Poxford University Press.

*“Having analysed more than 2500 Bilateral Investment Treaties (BITs) under the new method of quantitave restructuring, we have arrived to several conclusions. First, the field of investment arbitration will grow by two times by the end of 2025. Second, majority of the claims (90%) will concern the right for damages.”*

—

ບົດຄວາມໃນປັດຈຸບັນໄດ້ທົບທວນຄືນທາງດ້ານແງ່ມູມຕ່າງໆຂອງທ່າອຽງທີ່ຈະເກີດຂຶ້ນໃນອະນຸຍາ ໂຕຕຸລາການທີ່ຕິດພັນກັບການລົງທຶນ. ຕົວຢ່າງເຊັ່ນ, ເຮົາໄດ້ນຳໃຊ້ວິທີການໃໝ່ເພື່ອລວບ ລວມຂໍ້ມູນທີ່ຖືກຈັດກຸ່ມໃໝ່ພາຍໃຕ້ຫຼັກການການກຳນົດຕົວເລກ. ດ້ວຍເຫດຜົນນີ້ເຮົາຈຶ່ງສາມາດແນະນຳໄດ້ວ່າຊ່ອງທາງການແກ້ໄຂຂໍ້ພິພາດທີ່ເປັນທາງເລືອກຈະເພີ່ມຂຶ້ນເປັນສອງເທົ່າໃນຫຼາຍປີຕໍ່ໆໄປ. ນອກນັ້ນ, ພວກເຮົາຍັງເຫັນແນວໂນມຢ່າງຕໍ່ເນື່ອງຂອງການເພີ່ມຂຶ້ນຕົວເລກທີ່ກ່ຽວຂ້ອງກັບຂໍ້ພິພາດທີ່ຕິດພັນກັບກັບແກ້ຂັ້ນການຟື້ນຟູຄ່າເສຍຫາຍ. ສະຫຼຸບໄດ້ວ່າ, ໂລກຂອງອະນຸຍາໂຕຕຸລາການທີ່ຕິດພັນກັບການລົງທຶນຈະສືບຕໍ່ຂະຫຍາຍຕົວ ແລະ ພັດທະນາຕໍ່ໄປ.

Current article had reviewed the aspects of the upcoming trend in investment arbitration. For instance, we have used the novelty method of gathering the regrouped information under the principle of numbering. Upon this, we can now suggest that the alternative dispute resolution field will double in the upcoming years. Besides, we witness a steady trend of the growing number of disputes dealing with the harm recovery. To conclude, the world of investment arbitration would continue to grow and evolve.


Whaddya mean all my facts are wrong?!?
I copied everything straight off the internet!!
Pirillo & Fitz

# ຜົນປະໂຫຍດຈາກການຫຼີກເວັ້ນການຄັດລອກຜົນງານຂອງຜູ້ອື່ນ/ Benefits of avoiding plagiarism

ເມື່ອທ່ານອ້າງອີງແຫລ່ງຂໍ້ມູນທີ່ໄດ້ຮັບການຍອມຮັບທີ່ດີ. ຄໍາເວົ້າຂອງທ່ານຈະມີນໍ້າໜັກຫຼາຍຂຶ້ນ.

When you cite particular source that is well-respected. Your words gain extra weight.

# ພວກເຂົາຈະຈັບທ່ານໄດ້ຢ່າງແນ່ນອນ/ They will catch you...no doubt

UNIVERSITÉ DU LUXEMBOURG

ມະຫາວິທະຍາໄລທີ່ມີຊື່ສຽງທຸກແຫ່ງໄດ້ນຳໃຊ້ໂປຣແກຣມຄອມພິວເຕີເພື່ອກວດກາການຄັດລອກຜົນງານຂອງຜູ້ອື່ນ.

All respected Universities use the computer software detecting plagiarism.

# Is it Plagiarism?




UNIVERSITÉ DU LUXEMBOURG




Visit our website and follow our activities !

https://cooperationlaos.uni.lu/

UNIVERSITÉ DU LUXEMBOURG